# ບົດຂ່າວ

# ພິທີລົງນາມການຮ່ວມມືລະຫວ່າງ

## ກົມສ່ວຍສາອາກອນ ແລະ ທະນາຄານການຕ່າງປະເທດລາວ ມະຫາຊົນ

## ວ່າດ້ວຍເປີດການນຳໃຊ້ ລະບົບທັນສະໄໝເກັບຄ່າທຳນຽມທາງ

ນະຄອນຫຼວງວຽງຈັນ, ວັນທີ: 26/10/2017

ວັນທີ 26 ຕຸລາ 2017, ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ກົມສ່ວຍສາອາກອນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ວ່າດ້ວຍເປີດການນຳໃຊ້ ລະບົບທັນສະໄໝເກັບຄ່າທຳນຽມທາງ.

ໃນພິທີເຊັນສັນຍາຄັ້ງນີ້, ແມ່ນລົງນາມໂດຍ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ປອ. ພູທະນູເຜັດ ໄຊສົມບັດ, ຫົວໜ້າກົມສ່ວຍສາອາກອນ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມຄັ້ງນີ້ ປະກອບມີ:

1. ທ່ານ ປອ. ສົມພາວ ໄຟສິດ, ຜູ້ວ່າການທະນາຄານແຫ່ງ ສ.ປ.ປ ລາວ.
2. ທ່ານ ບຸນໂຈມ ອຸບົນປະເສີດ, ຮອງລັດຖະມົນຕີກະຊວງການເງິນ.
3. ທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ, ຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ ແລະ ທັງເປັນປະທານສະພາບໍລິຫານ ທຄຕລ.

ພ້ອມດ້ວຍ ສະພາບໍລິຫານ ຄະນະອຳນວຍການ, ຄະນະພະແນກ, ຄະນະສູນ, ຄະນະສາຂາ, ວິຊາການທີ່ກ່ຽວຂ້ອງຂອງ ທຄຕລ ແລະ ຄະນະຜູ້ແທນຈາກ ກົມສ່ວຍສາອາກອນ, ກະຊວງການເງິນ. ນອກຈາກນີ້, ກໍ່ມີພາກສ່ວນແຂກທີ່ມີກຽດ ແລະ ນັກຂ່າວ-ສື່ມວນຊົນ ຈາກຫຼາຍພາກສ່ວນເຂົ້າຮ່ວມ ຢ່າງພ້ອມພຽງ.




ກົມສ່ວຍສາອາກອນ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແມ່ນໄດ້ມີການກະກຽມໂຄງການນີ້ ຮ່ວມກັນເປັນເວລາເກືອບ 3 ເດືອນ. ຈຸດປະສົງການຮ່ວມມືໃນຄັ້ງນີ້ແມ່ນເພື່ອ ໃຫ້ບໍລິການເສຍຄ່າທຳນຽມທາງດ້ວຍລະບົບທີ່ທັນສະໄໝ ຜ່ານລະບົບທະນາຄານ. ບໍລິການດັ່ງກ່າວນີ້ ຈະສາມາດອຳນວຍຄວາມສະດວກໃຫ້ແກ່ພໍ່ແມ່ປະຊາຊົນທຸກໆທ່ານໃນການ

ຊຳລະພັນທະຄ່າທຳນຽມທາງ, ບໍລິການມີຄວາມປອດໄພ, ສາມາດຫຼຸດຜ່ອນການນຳໃຊ້ເງິນສົດ, ມີຄວາມສະດວກໃຫ້ພາກລັດຖະບານໃນການເກັບລາຍຮັບຈາກໂຄງການດັ່ງກ່າວ.

ໃນເບື້ອງຕົ້ນການຊຳລະຄ່າທາງສາມາດປະຕິບັດໄດ້ ຜ່ານ 3 ຊ່ອງທາງຄື: 1. ຜ່ານຕູ້ ATM ຂອງ ທຄຕລ, 2. ຜ່ານແອັບພິເຄເຊິນ BCEL One ແລະ 3. ຜ່ານເຄົ້າເຕີ້ບໍລິການຂອງ ທຄຕລ. ໃນຂັ້ນຕໍ່ໄປ ພວກເຮົາຈະສືບຕໍ່ພັດທະນາລະບົບໃຫ້ສາມາດ ຊຳລະຜ່ານຕູ້ບໍລິການອັດຕະໂນມັດ ແລະ ຕົວແທນໂອນເງິນດ່ວນຊຸມຊົນ ຫລື BCOME ຂອງ ທຄຕລ ຕື່ມອີກ.

ການນຳໃຊ້ ລະບົບທັນສະໄໝ ເກັບຄ່າທຳນຽມທາງ ນີ້ ທຄຕລ ໄດ້ເລີ່ມທົດລອງໃຫ້ບໍລິການໃນວັນທີ 20 ຕຸລາ 2017 ນີ້ ແລະ ຈະມີການເປີດການນຳໃຊ້ເປັນທາງການ ໃນວັນທີ 30 ຕຸລາ 2017 ນີ້ເປັນຕົ້ນໄປ, ເຫັນວ່າມີລູກຄ້າຈຳນວນຫຼາຍໃຫ້ຄວາມສົນໃຈສອບຖາມ ແລະ ຊຳລະ, ການຊຳລະຄ່າທຳນຽມທາງ ລູກຄ້າພຽງແຕ່ຖືເອກະສານໃບທະບຽນລົດ ຫຼື ປື້ມທະບຽນລົດ ເພື່ອປະກອບເອກະສານການຊຳລະ ແລະ ຫຼັງຈາກຊຳລະແລ້ວ ກໍ່ສາມາດຮັບສະຕິກເກີ້ຄ່າທາງໄດ້ທັນທີ.




ທ່ານ ພູຂຽວ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ກ່າວໃນພິທີເຊັນສັນຍາວ່າ: ເນື່ອງຈາກບໍລິການດັ່ງກ່າວເປັນບໍລິການໃໝ່ ແລະ ນຳໃຊ້ຄວາມທັນສະໄໝໃນການເສຍຄ່າທຳນຽມທາງ, ຄວາມທັນສະໄໝຂອງບໍລິການ ຈະຊ່ວຍພາກລັດໃນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ທັນກັບເວລາ, ຖືກຕ້ອງ, ໂປ່ງໃສ ແລະ ສາມາດກວດສອບໄດ້. ເຖິງຢ່າງໃດກໍ່ຕາມ, ໃນເບື້ອງຕົ້ນ ການບໍລິການອາດຈະຍັງບໍ່ທັນສາມາດລົງສູ່ເຂດຫ່າງໄກສອກຫລີກໄດ້ເທື່ອ, ສຳລັບຜູ້ທີ່ຢູ່ເຂດຫ່າງໄກກໍ່ຈະຕ້ອງໄດ້ເຂົ້າມານຳໃຊ້ບໍລິການດັ່ງກ່າວຜ່ານຈຸດບໍລິການ ແລະ ຕູ້ ATM ຂອງ ທຄຕລ ໃນແຕ່ລະເຂດກ່ອນ. ແຕ່ໃນອະນາຄົດພວກເຮົາຈະມີການແກ້ໄຂໂດຍຂະຫຍາຍຕົວແທນໂອນເງິນດ່ວນຊຸມຊົນ ຫຼື BCOME ຂອງ ທຄຕລ ໃຫ້ກວ້າງຂວາງອອກສູ່ເຂດຫ່າງໄກຫຼາຍຂຶ້ນ ການຊຳລະຄ່າທາງ ແລະ ການບໍລິການອື່ນໆຂອງທະນາຄານກໍ່ຈະມີຄວາມສະດວກຂຶ້ນຕື່ມ.